ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 733/ນຍ
ນະຄອນຫຼວງວຽງຈັນ, ວັນທີ 30 ທັນວາ 2021

# ດຳລັດ
# ວ່າດ້ວຍ ການສ້າງຕັ້ງ ອຸທິຍານແຫ່ງຊາດ ພູເຂົາຄວາຍ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າສະຫງວນແຫ່ງຊາດ ສະບັບເລກທີ 134/ລບ, ລົງວັນທີ 13/5/2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0671/ກປ, ລົງວັນທີ 17 ພະຈິກ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ອຸທິຍານແຫ່ງຊາດ ພູເຂົາຄວາຍ ແນໃສ່ ຄຸ້ມຄອງ, ປົກປັກຮັກສາ ລັກສະນະສະເພາະທີ່ໂດດເດັ່ນ ດ້ານພູມສັນຖານທີ່ ເປັນຜາສູງ, ຫີນເປັນຊັ້ນໆ, ປ່າດົງດິບ, ປ່າໄມ້ແປກ, ພູມີທັດທີ່ງຫຍ້າ, ຫຼາກຫຼາຍທາງດ້ານຊີວະນາໆພັນ, ຖິ່ນທີ່ຢູ່ອາໄສຂອງພັນສັດ, ພັນພືດ ແລະ ເຄື່ອງປ່າຂອງດົງ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳ ທີ່ມີຄວາມສຳຄັນທາງດ້ານການທ່ອງທ່ຽວ ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມ ຂອງທິວທັດທຳມະຊາດ, ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ອຸທິຍານແຫ່ງຊາດ ພູເຂົາຄວາຍ**

ອຸທິຍານແຫ່ງຊາດ ພູເຂົາຄວາຍ ຕັ້ງຢູ່ພາກກາງ ກວມເອົາ 4 ແຂວງ, ໃນນີ້ ນະຄອນຫຼວງວຽງຈັນ ກວມເອົາ 2 ເມືອງ ຄື: ເມືອງໄຊທານີ ແລະ ເມືອງປາກງື່ມ; ແຂວງວຽງຈັນ ກວມເອົາ 2 ເມືອງ ຄື: ເມືອງທຸລະຄົມ ແລະ ເມືອງແກ້ວອຸດົມ; ແຂວງໄຊສົມບູນ ກວມເອົາ 2 ເມືອງ ຄື: ເມືອງລ້ອງຊານ ແລະ ເມືອງຮົ່ມ ແລະ ແຂວງບໍລິຄຳໄຊ ຄື: ເມືອງທ່າພະບາດ ຊຶ່ງຢູ່ໃນລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ | 103°22'31" E; |
| | ເສັ້ນຂະໜານ | 18°34'10" N; |
| ທິດຕາເວັນອອກ | ເສັ້ນແວງ | 103°29'13" E; |
| | ເສັ້ນຂະໜານ | 18°28'56" N; |
| ທິດໃຕ້ | ເສັ້ນແວງ | 103°04'12" E; |
| | ເສັ້ນຂະໜານ | 18°13'29" N; |
| ທິດຕາເວັນຕົກ | ເສັ້ນແວງ | 102°38'50" E; |
| | ເສັ້ນຂະໜານ | 18°24'24" N. |

ຂອບເຂດອຸທິຍານແຫ່ງຊາດ ພູເຂົາຄວາຍ ໃຫ້ອີງໃສ່ແຜນທີ່ພູມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາ ເສັ້ນແວງ ແລະ ເສັ້ນຂະໜານ ເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ ສັນພູ (ສັນປັນນ້ຳ), ຕີນພູ, ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເປັນຢ່າງດີ.

ອຸທິຍານແຫ່ງຊາດ ພູເຂົາຄວາຍ ມີເນື້ອທີ່ທັງໝົດ 191.942 ຮຕ (ໜຶ່ງຮ້ອຍເກົ້າສິບເອັດພັນເກົ້າຮ້ອຍສີ່ສິບສອງພັນ ເຮັກຕາ) ເຊິ່ງກວມເອົາ ນະຄອນຫຼວງວຽງຈັນ. ໃນເນື້ອທີ່ 22.000 ຮຕ (ຊາວສອງພັນ ເຮັກຕາ), ແຂວງວຽງຈັນ 38.294 ຮຕ (ສາມສິບແປດພັນສອງຮ້ອຍເກົ້າສິບສີ່ ເຮັກຕາ), ແຂວງໄຊສົມບູນ 24.031 ຮຕ (ຊາວສີ່ພັນສາມສິບເອັດ ເຮັກຕາ) ແລະ ແຂວງບໍລິຄຳໄຊ ໃນເນື້ອທີ່ 107.617 ເຮັກຕາ (ໜຶ່ງຮ້ອຍເຈັດພັນຫົກຮ້ອຍສິບເຈັດ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງອຸທິຍານແຫ່ງຊາດ ພູເຂົາຄວາຍ ສະແດງໃຫ້ເຫັນຢູ່ໃນແຜນທີ່ ມາດຕາສ່ວນ 1:500.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ອຸທິຍານແຫ່ງຊາດ ພູເຂົາຄວາຍ ແມ່ນໜ້າທີ່ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ພູເຂົາຄວາຍ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງຄຸ້ມຄອງດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ອຸທິຍານແຫ່ງຊາດ ພູເຂົາຄວາຍ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດອຸທິຍານ ແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ ອຸທິຍານແຫ່ງຊາດ;
5. ກອງທຶນທ່ອງທ່ຽວ ແຫ່ງຊາດ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ;

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ